ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 05 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 31 AUG 2020

# ໜັງສືຊີ້ແຈງ

**ຮຽນ: ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືຮຸ້ນຢູ່ທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ ທີ່ນັບຖື;**

**ເລື່ອງ: ຊີ້ແຈງກ່ຽວກັບການເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ 2020 ລ່າຊ້າ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;
- ອີງຕາມ ແຈ້ງການກ່ຽວກັບການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ສະບັບເລກທີ 0009/ຄຄຊ ລົງວັນທີ 25 ພຶດສະພາ 2020.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ອີງຕາມລະບຽບການທີ່ກ່ຽວຂ້ອງ ທຄຕລ ຕ້ອງເປີດເຜີຍຂໍ້ມູນເອກະສານລາຍງານການເງິນປະຈຳ 06 ເດືອນຕົ້ນປີ 2020 ພາຍໃນວັນທີ 29 ສິງຫາ 2020. ແຕ່ໃນພາກປະຕິບັດຕົວຈິງ ທຄຕລ ບໍ່ສາມາດເປີດເຜີຍເອກະສານດັ່ງກ່າວໄດ້ຕາມກຳນົດເວລາ ດ້ວຍເຫດຜົນ ດັ່ງນີ້:

1. ໄດ້ປ່ຽນແປງຜູ້ກວດສອບໃໝ່ໃນປີ 2020 ຊຶ່ງບໍລິສັດດັ່ງກ່າວ ແມ່ນດຳເນີນການກວດສອບ ທຄຕລ ເປັນປີທຳອິດ ຈຶ່ງຕ້ອງໃຊ້ເວລາໃນການເກັບກຳ ແລະ ທົບທວນຂໍ້ມູນໃນເອກະສານລາຍງານການເງິນຂອງ ທຄຕລ ຫຼາຍກວ່າປີຜ່ານມາ;
2. ເນື່ອງຈາກຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ໃນທ້າຍປີ 2019 ແລະ ແກ່ຍາວຮອດປີ 2020 ກໍ່ຄືປັດຈຸບັນ ເຮັດໃຫ້ການເຄື່ອນໄຫວຂອງທຸກຂະແໜງການ ບໍ່ມີຄວາມຄ່ອງຕົວ ເທົ່າທີ່ຄວນ.

ຕໍ່ບັນຫາດັ່ງກ່າວ ທຄຕລ ກຳລັງສຸມໃສ່ແກ້ໄຂດ້ວຍຄວາມຮັບຜິດຊອບສູງ ຊຶ່ງຄາດວ່າຈະສາມາດເປີດເຜີຍເອກະສານລາຍງານການເງິນດັ່ງກ່າວ ພາຍໃນວັນທີ 7 ກັນຍາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຂໍອະໄພມານະທີ່ນີ້ດ້ວຍ.

**ຜູ້ອຳນວຍການໃຫຍ່**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫລວງວຽງຈັນ

**ພູຂົງ ຈັນທະຈັກ**

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA